ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*********************

ສຳນັກງານ
ນາຍົກລັດຖະມົນຕີ

ເລກທີ 38/ນ.ຍ

ນະຄອນຫຼວງວຽງຈັນ, ວັນທີ 17.10.2007

# ຄຳສັ່ງ

## ຂອງນາຍົກລັດຖະມົນຕີ
## ກ່ຽວກັບການເອົາໃຈໃສ່ໂຄສະນາເຜີຍແຜ່,
## ສຶກສາອົບຮົມສ້າງສະຕິເຄົາລົບກົດໝາຍ

ເຖິງ : ບັນດາລັດຖະມົນຕີວ່າການກະຊວງ, ຫົວໜ້າອົງການແທບເທົ່າກະຊວງ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ເຈົ້າແຂວງໃນທົ່ວປະເທດ.

- ອີງຕາມ ມາດຕາ 12 ຂອງກົດໝາຍວ່າດ້ວຍ ລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ມາດຕາ 8 ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 02/ສປປ, ວັນທີ 20 ຕຸລາ 2003 ວ່າດ້ວຍການສ້າງນິຕິກຳ.

ເລີ່ມແຕ່ຊຸມປີ 1989-90 ມາເຖິງປະຈຸບັນ ລັດພວກເຮົາໄດ້ຫັນເອົາແນວທາງນະໂຍບາຍປ່ຽນແປງໃໝ່ຂອງພັກມາເປັນລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳຕ່າງໆເປັນຈຳນວນຫຼວງຫຼາຍສົມຄວນ ເພື່ອເປັນເຄື່ອງມືໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ. ແຕ່ແນວທາງ, ແຜນນະໂຍບາຍ ແລະ ນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ ແລະ ບັນດານິຕິກຳຂອງລັດເຖິງວ່າຈະດີ, ຈະຖືກຕ້ອງສອດຄ່ອງປານໃດກໍຕາມ ກໍ່ຈະເປັນເອກະສານທີ່ບໍ່ມີຄຸນຄ່າ, ບໍ່ມີຄວາມໝາຍຫຍັງ ຖ້າວ່າເອກະສານເຫຼົ່ານັ້ນຫາກບໍ່ໄດ້ຖືກນຳໄປເຜີຍແຜ່ໃຫ້ສັງຄົມໄດ້ຮັບຮູ້ຢ່າງທົ່ວເຖິງ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ ແລະ ມີປະສິດທິພາບ. ເພາະສະນັ້ນ ການເອົາໃຈໃສ່ໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມສ້າງສະຕິເຄົາລົບກົດໝາຍ ຈຶ່ງເປັນຄວາມຮຽກຮ້ອງຕ້ອງການພາວະວິໄສໃນປະຈຸບັນ.

ໃນໄລຍະຜ່ານມາການໂຄສະນາເຜີຍແຜ່, ສຶກສາອົບຮົມ, ການປະຕິບັດ ແລະ ການກວດກາການຈັດຕັ້ງປະຕິບັດກົດໝາຍ ແມ່ນໄດ້ຮັບການເອົາໃຈໃສ່ຈາກບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆດີສົມຄວນ ຈຶ່ງເຮັດໃຫ້ຄວາມຮັບຮູ້ເຂົ້າໃຈຂອງປະຊາຊົນ ກ່ຽວກັບກົດໝາຍ ກໍ່ນັບມື້ດີຂຶ້ນ, ສະຕິເຄົາລົບກົດໝາຍໄດ້ຮັບການເຊີດຊູໃຫ້ສູງຂຶ້ນເປັນກ້າວໆ, ປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບສຸກ ແລະ ຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ. ແຕ່ຄຽງຄູ່ກັບນັ້ນ ກໍ່ສັງເກດເຫັນວ່າ ຍັງມີຫຼາຍຂະແໜງການ ແລະ ທ້ອງຖິ່ນຍັງບໍ່ທັນເອົາໃຈໃສ່ເທົ່າທີ່ຄວນໃນການຫັນເອົາວຽກງານນີ້ ເປັນໜ້າທີ່ການເມືອງຂອງຕົນ, ມີແຕ່ເອື່ອຍອີງໃສ່ພາກສ່ວນອື່ນເຮັດການໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມສ້າງສະຕິເຄົາລົບກົດໝາຍແທນຂະແໜງການ ແລະ ທ້ອງຖິ່ນຂອງຕົນ, ດ້ວຍເຫດນັ້ນຈຶ່ງເຮັດໃຫ້ການເຄື່ອນໄຫວສ້າງສະຕິກົດໝາຍໃຫ້ແກ່ສັງຄົມຍັງບໍ່ເປັນຂະບວນຟົດຟື້ນ, ບໍ່ຕໍ່ເນື່ອງ, ບໍ່ທົ່ວ

ເຖິງ, ບໍ່ເລິກເຊິ່ງ ແລະ ບໍ່ທັນລົງເລິກໃສ່ທຸກເປົ້າໝາຍ ເຊິ່ງເປັນສາຍເຫດສຳຄັນທີ່ພາໃຫ້ມີການລະເມີດກົດໝາຍເກີດຂຶ້ນ.

ສະນັ້ນ, ເພື່ອຮັບປະກັນການຈັດຕັ້ງປະຕິບັດໃຫ້ຖືກຕ້ອງຕາມມາດຕາ 8 ລັດຖະບັນຍັດ ເລກທີ 02/ສປປ, ວັນທີ 20 ຕຸລາ 2003 ຂອງປະທານປະເທດ,ທັງເປັນການເພີ່ມທະວີຄວາມຮັບຜິດຊອບຂອງອົງການ, ການຈັດຕັ້ງຕ່າງໆ ຕໍ່ການໂຄສະນາເຜີຍແຜ່ ແນວທາງນະໂຍບາຍຂອງພັກ ຊຶ່ງໄດ້ຫັນມາເປັນລະບຽບກົດໝາຍຂອງລັດແລ້ວນັ້ນ ໃຫ້ແກ່ພະນັກງານ, ປະຊາຊົນລາວບັນດາເຜົ່າທຸກຊັ້ນຄົນ, ຊາວຕ່າງດ້າວ ແລະ ຊາວຕ່າງປະເທດ ໃນຂອບເຂດທົ່ວປະເທດໃຫ້ມີສະຕິເຄົາລົບກົດໝາຍ.

**ນາຍົກລັດຖະມົນຕີ ອອກຄຳສັ່ງ:**

1. ໃຫ້ແຕ່ລະກະຊວງ, ອົງການທຽບເທົ່າກະຊວງ ຈັດຕັ້ງໜ່ວຍງານກົດໝາຍຂຶ້ນຢ່າງແທດເໝາະກັບສະພາບຕົວຈິງຢູ່ພາຍໃນກະຊວງ, ອົງການຂອງຕົນ ( ອາດຈະເປັນກົມ, ພະແນກ ຫຼື ເປັນຫ້ອງການກົດໝາຍ) ເພື່ອເປັນເສນາທິການໃຫ້ການນຳກະຊວງ, ອົງການກ່ຽວກັບວຽກງານກົດໝາຍ, ເປັນຕົ້ນແມ່ນການສ້າງຕັ້ງ ແລະ ການປະຕິບັດກົດໝາຍ; ສ່ວນຢູ່ຂັ້ນແຂວງ, ນະຄອນຫຼວງວຽງຈັນ, ຂັ້ນເມືອງນັ້ນໃຫ້ຖືເອົາພະແນກຍຸຕິທຳແຂວງ, ນະຄອນຫຼວງວຽງຈັນ ແລະ ຫ້ອງການຍຸຕິທຳເມືອງ ເປັນໜ່ວຍງານກົດໝາຍໂດຍກົງຊ່ວຍອົງການປົກຄອງທ້ອງຖິ່ນໃນການສ້າງ ແລະ ປະຕິບັດກົດໝາຍ; ສຳລັບພະແນກການຕ່າງໆອ້ອມຂ້າງແຂວງ, ນະຄອນຫຼວງວຽງຈັນ, ບັນດາບໍລິສັດໃຫຍ່ຂອງລັດ ແລະ ເອກະຊົນ, ໂຮງຈັກໂຮງງານ ກໍ່ຄວນຈັດຕັ້ງໃຫ້ມີໜ່ວຍງານກົດໝາຍຂຶ້ນເຊັ່ນດຽວກັນ ເພື່ອເຮັດວຽກງານສ້າງ ແລະ ໂຄສະນາອົບຮົມສ້າງສະຕິເຄົາລົບກົດໝາຍຢ່າງທົ່ວເຖິງ.

2. ກະຊວງ, ອົງການໃດ ເປັນຜູ້ສະເໜີສ້າງກົດໝາຍໃດ ກໍ່ແມ່ນກະຊວງ, ອົງການນັ້ນເປັນເຈົ້າການໃນການສ້າງຄູ່ມື, ການພິມ ແລະ ການໂຄສະນາເຜີຍແຜ່, ສຶກສາອົບຮົມກົດໝາຍ ແລະ ຕິດຕາມກວດກາໂດຍມີການສົມທົບກັບກະຊວງຍຸຕິທຳ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດໄດ້ຮັບຜົນດີ.

3. ເນື້ອໃນການໂຄສະນາເຜີຍແຜ່, ແລະ ສຶກສາອົບຮົມສ້າງສະຕິເຄົາລົບກົດໝາຍ ແມ່ນໃຫ້ສົມທົບການໂຄສະນາກົດໝາຍ ກັບແນວທາງ, ນະໂຍບາຍ, ບັນດາມະຕິຂອງພັກຊຶ່ງພົວພັນເຖິງກົດໝາຍ ຫຼື ນິຕິກຳທີ່ນຳໄປເຜີຍແຜ່ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າຕ່າງໆ.

4. ອີງໃສ່ສະພາບຈຸດພິເສດຕົວຈິງແຕ່ລະຂະແໜງການ, ແຕ່ລະທ້ອງຖິ່ນ ເພື່ອໃຊ້ຮູບການໂຄສະນາເຜີຍແຜ່ກົດໝາຍຫຼາຍຮູບຫຼາຍແບບທີ່ເໝາະສົມກັບແຕ່ລະເປົ້າໝາຍ ເຊັ່ນ: ການເຄື່ອນໄຫວໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມໂດຍກົງ (ທາງປາກເປົ່າ) ໂດຍຜ່ານການເຄື່ອນໄຫວຂອງພະນັກງານກໍ່ສ້າງຮາກຖານ, ຂອງນັກກົດໝາຍ; ການໂຄສະນາເຜີຍແຜ່ທາງພາຫະນະສື່ມວນຊົນ: ໜັງສືພິມ, ວິທະຍຸ, ໂທລະໂຄ່ງ ແລະ ໂທລະພາບ; ການໂຄສະນາເຜີຍແຜ່ກົດໝາຍ ໂດຍຜ່ານການໃຫ້ຄຳປຶກສາດ້ານກົດໝາຍ ແລະ ການຊ່ວຍເຫຼືອດ້ານກົດໝາຍ; ຜ່ານການໄກ່ເກ່ຍຂໍ້ຂັດແຍ່ງຕ່າງໆ; ນຳເອົາກົດໝາຍເຂົ້າໃນຫຼັກສູດການຮຽນການສອນຢູ່ໃນໂຮງຮຽນ ແລະ ສະຖາບັນການສຶກສາຂັ້ນຕ່າງໆໂດຍເລີ່ມຕັ້ງແຕ່ຊັ້ນມັດທະຍົມສຶກສາຕອນຕົ້ນ. ນອກຈາກຮູບການຕ່າງໆເທິງນີ້ແລ້ວ ຍັງສາມາດເຜີຍແຜ່, ສຶກສາອົບຮົມກົດໝາຍ ດ້ວຍການສະແດງລະຄອນ, ລຳເລື່ອງ, ສຽງເພັງ, ຈັດຕັ້ງການສົນທະນາ, ຄຳຖາມ ຄຳຕອບ ແລະ ອື່ນໆ ທີ່ມີເນື້ອໃນພົວພັນເຖິງການສຶກສາອົບຮົມ ຫຼື ການປະຕິບັດກົດໝາຍ.

ໃຫ້ກະຊວງຍຸຕິທຳ ສົມທົບກັບ ກະຊວງ ຖະແຫຼງຂ່າວ ແລະ ວັດທະນະທຳ ປັບປຸງເນື້ອໃນ ແລະ ວິທີໂຄສະນາສຶກສາອົບຮົມກົດໝາຍ ໂດຍຜ່ານສື່ມວນຊົນໃຫ້ດີຂຶ້ນຕື່ມ. ສຳລັບວິທະຍຸກະຈາຍສຽງແຫ່ງຊາດ ແລະ ວິທະຍຸກະຈາຍສຽງທ້ອງຖິ່ນ ກໍ່ຄວນຈັດຕັ້ງການໂຄສະນາເຜີຍແຜ່ກົດໝາຍເປັນພາສາຊົນເຜົ່າຕື່ມອີກ, ເປັນຕົ້ນແມ່ນພາສາມົ້ງ, ຂະມຸ ແລະ ບັນດາເຜົ່າທາງພາກໃຕ້, ທັງຄົ້ນຄວ້າ ແລະ ໂຄສະນາກົດໝາຍໂດຍຜ່ານອິນເຕີເນັດ ຫຼືແວັບໄຊເພື່ອໃຫ້ຄົນລາວຢູ່ຕ່າງປະເທດມີໂອກາດຮຽນຮູ້ກົດໝາຍລາວ.

5. ໃຫ້ທຸກຂະແໜງການ, ອົງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ເອົາໃຈໃສ່ໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມສ້າງສະຕິເຄົາລົບກົດໝາຍຢ່າງກວ້າງຂວາງ ແລະ ທົ່ວເຖິງເພື່ອເຮັດໃຫ້ພະນັກງານ, ສະມາຊິກພັກ, ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນຮູ້ບັນຍາຊົນ ແລະ ປະຊາຊົນບັນດາເຜົ່າຮັບຮູ້ເຂົ້າໃຈກົດໝາຍຕ່າງໆຢ່າງເລິກເຊິ່ງ ແລະ ເປັນແບບຢ່າງໃນການປະຕິບັດ.

6. ໃຫ້ກະຊວງຍຸຕິທຳ ເອົາໃຈໃສ່ ປະສານສົມທົບ ແລະ ຊຸກຍູ້ບັນດາຂະແໜງການ, ອົງການ ແລະ ທ້ອງຖິ່ນ ຈັດຕັ້ງການໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມ ສ້າງສະຕິເຄົາລົບກົດໝາຍໃນທາງເລິກ ແລະ ທາງກວ້າງຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ, ເປັນຕົ້ນແມ່ນເອົາໃຈໃສ່ຄຸ້ມຄອງການຈັດພິມປຶ້ມກົດໝາຍໃຫ້ ເປັນເອກະພາບເພື່ອແຈກຢາຍ ແລະ ຈຳໜ່າຍໃຫ້ທົ່ວເຖິງ ພ້ອມກັນນັ້ນກໍ່ຊຸກຍູ້ໃຫ້ພາກສ່ວນທີ່ມີໜ້າທີ່ ກວດກາການຈັດຕັ້ງປະຕິບັດກົດໝາຍ ໃຫ້ເອົາໃຈໃສ່ເຄື່ອນໄຫວຢ່າງແຂງແຮງກວ່າເກົ່າ.

7. ໃຫ້ທຸກຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນເອົາໃຈໃສ່ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ໜ່ວຍງານກົດໝາຍ ໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານໃຫ້ມີປະສິດທິພາບສູງ, ເປັນຕົ້ນແມ່ນດ້ານງົບປະມານ, ພາຫະນະ ແລະ ວັດຖຸອຸປະກອນຮັບໃຊ້ອັນຈຳເປັນເຊັ່ນດຽວກັບໜ່ວຍງານອື່ນໃນຂະແໜງການຂອງຕົນ.

8. ມອບໃຫ້ລັດຖະມົນຕີວ່າການກະຊວງຍຸຕິທຳ ເປັນໃຈກາງປະສານສົມທົບ ແລະ ຊຸກຍູ້ບັນດາຂະແໜງການ, ທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງຕ່າງໆ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ໃຫ້ໄດ້ຮັບຜົນດີ, ພ້ອມທັງອອກຄຳແນະນຳລະອຽດກ່ຽວກັບການຈັດຕັ້ງປະຕິບັດຕົວຈິງໂດຍມີຈຸດສຸມ, ສອດຄ່ອງກັບແຕ່ລະເປົ້າໝາຍ ແລະ ຕິດຕາມກວດກາຢ່າງເປັນລະບົບ, ປົກກະຕິ, ເປັນຕົ້ນຢູ່ໃນເຂດຕົວເມືອງຄວນມີວິທີການແນວໃດ ແລະ ສຸມໃສ່ບັນຫາໃດ? ຢູ່ເຂດຊົນນະບົດ ແລະ ເຂດພູດອຍ ຄວນມີວິທີແນວໃດ ແລະ ສຸມໃສ່ບັນຫາໃດ?

9. ບັນດາລັດຖະມົນຕີວ່າການກະຊວງ, ຫົວໜ້າອົງການທຽບເທົ່າກະຊວງ, ເຈົ້າຄອງນະຄອນຫຼວງວຽງຈັນ, ເຈົ້າແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ.

10. ຜ່ານການຈັດຕັ້ງປະຕິບັດໄດ້ຮັບຜົນ ຫຼື ພົບຂໍ້ສະດວກ, ຂໍ້ຫຍຸ້ງຍາກແນວໃດນັ້ນ ໃຫ້ກະຊວງຍຸຕິທຳ ຕິດຕາມ, ສະຫຼຸບສັງລວມລາຍງານໃຫ້ນາຍົກລັດຖະມົນຕີຊາບ ແລະ ເພື່ອຊີ້ນຳ.

11. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ